# ການພັດທະນາຊົນນະບົດແບບມີສ່ວນຮ່ວມຂອງປະຊາຊົນ ຂອງໂຄງການ
# ຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ
# ໃນເຂດ ບ້ານ ທ່າຮູ້ ເມືອງປະທຸມພອນ ແຂວງຈຳປາສັກ

Integrated Rural Development of villages of Sustainable Forestry and Rural Development Project Thahoo village, Pathoumphone District Champasack Province


ໂດຍ:

ນ ພອນວິລັດ ແກ້ວມະນີທອງ
ນ ກັນລະຍາ ໄຊຍະຕາວ
ທ ຄຳມະນີ ອຳມະລາ

# ບົດຄັດຫຍໍ້

ຜ່ານການເກັບກຳຂໍ້ມູນສຳລັບການຂຽນບົດລາຍງານວິຊາການໃນຫົວຂໍ້ ການພັດທະນາຊົນນະບົດແບບມີສ່ວນຮ່ວມຂອງປະຊາຊົນ ບ້ານ ທ່າຮູ້ ເມືອງປະທຸກພອນ ແຂວງຈຳປາສັກ ໃນຄັ້ງນີ້ພວກຂ້າພະເຈົ້າໄດ້ໃຊ້ເວລາຢູ່ 60 ວັນ ເພື່ອລົມທົບກັບຫຼາຍພາກສ່ວນທີ່ກ່ຽວຂອ້ງເຊັ່ນ: ພະແນກກະສິກຳ - ປ່າໄມ້ ແຂວງ, ຂະແໜງກະສິກຳ - ປ່າໄມ້ ເມືອງ, ອຳນາດການປົກຄອງຂັ້ນບ້ານ ແລະ ພໍ່ແມ່ປະຊາຊົນຊາວບ້ານ ທ່າຮູ້ ທາງນີ້ເພື່ອຮັບຮູ້ກິດຈຳການມີສ່ວນຮ່ວມໃນການພັດທະນາ ໂດຍໄດ້ລົງໄກ້ຊິດຕິດແທດກັບພໍ່ແມ່ປະຊາຊົນ ນຳໃຊ້ແບບຟອມສຳພາດຄອບຄົວຈຸດສຸມທີ່ໄດ້ຮັບຜົນປະໂຫຍດໂດຍກົງ ຈາກໂຄງການ, ສັງເກດສອບຖາມອຳນາດການປົກຄອງຂັ້ນບ້ານ ຜ່ານການສຶກສາຄົ້ນຄວ້າເຫັນໄດ້ສະພາບລວມ, ສະພາບເສດຖະກິດ - ສັງຄົມ ແລະວັດທະນາທຳຂອງບ້ານ, ວິທີການແຜນ ການການພັດທະນາຂອງໂຄງການ ແລະ ຜົນໄດ້ຮັບຕ່າງໆເຊັ່ນ: ປະຊາຊົນຊາວ ທ່າຮູ້ ໄດ້ຮັບການພັດທະນາຫຼາຍດ້ານ ໂດຍສະເພາະວຽກງານການພັດທະນາກະສິກຳລ້ຽງສັດແບບມີສ່ວນຮ່ວມເພື່ອຮັບປະກັນດ້ານສະບຽງອາຫານ ຕ້ານໄພອຶດຫິວ ຜະລິດໃຫ້ໄດ້ຫຼາຍເພື່ອຂາຍເປັນສິນຄ້າຫັນປ່ຽນວິຖີຊີວິດຈາກອັນເກົ່າໄປສູ່ອັນໃໝ່ ໂດຍສະເພາະການພັດທະນາພື້ນຖານໂຄງລ່າງ, ການຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ, ຫັນມາປູກພືດໃຫ້ໝາກ, ສຸມໃສ່ການລ້ຽງສັດຕະຫຼອດເຖິງການນຳໃຊ້ຊັບພະຍາກອນຢ່າງເໝາະສົມ ແລະ ມີຄຸນຄ່າ, ປະຊາຊົນ ບ້ານ ທ່າຮູ້ ມີສ່ວນຮ່ວມໃນການມອບດິນມອບປ່າ ຈັດແບ່ງເຂດແດນລະຫວ່າງຕໍ່ບ້ານ ວາງແຜນນຳຊ້ເນື້ອທີ່ດິນ, ມີສ່ວນຮ່ວມໃນການຕ້ານສະກັດກັ້ນການຕັດໄມ້ທຳລາຍປ່າຮ່ວມກັບໂຄງການ, ມີການພັດທະນາເສດຖະກິດ - ສັງ ຄົມ ແລະ ວັດທະນາທຳ, ເພື່ອເຮັດໃຫ້ຕົນເອງຫຼຸດພົ້ນອອກຈາກຄວາມທຸກຈົນເຂົາເຈົ້າຮັບຮູ້ເຖິງຄຸນຄ່າຊັບພະຍາກອນປ່າໄມ້ ແລະ ຮູ້ຈັກນຳໃຊ້ຄຳວ່າ ຍືນນານ, ຮ່ວມເຮັດ, ຮ່ວມທຳ, ຮ່ວມຜົນປະໂຫຍດ ພາຍໃຕ້ການນຳພາຂອງພະນັກງານວິຊາການຈກໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ.